**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ເລກທີ 416 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 05 JUN 2015

# ຂໍ້ຕົກລົງ

## ວ່າດ້ວຍ ການກຳນົດຜູ້ຄຸ້ມຄອງວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບ ທະນາຄານທຸລະກິດ ແລະ ສະຖາບັນການເງິນ

- ອີງຕາມກົດໝາຍວ່າດ້ວຍ ການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມໜັງສືສະເໜີຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 437/ໜຕຟງ, ລົງວັນທີ 05 ພຶດສະພາ 2015.

### ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດຜູ້ຄຸ້ມຄອງວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມຄ່ອງຕົວ ແລະ ມີປະສິດທິຜົນ ແນໃສ່ໃຫ້ການຄຸ້ມຄອງມີຄວາມເປັນເອກະພາບ ແລະ ລວມສູນ.

**ມາດຕາ 2 ການຄຸ້ມຄອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ**

ສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນຜູ້ຮັບຜິດຊອບອອກນິຕິກຳ, ດຳເນີນການກວດກາ ແລະ ການປະເມີນຄວາມສ່ຽງກ່ຽວກັບວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕໍ່ກັບທະນາຄານທຸລະກິດ ແລະ ສະຖາບັນການເງິນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນ ແລະ ກົມນະໂຍບາຍເງິນຕາ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຄຸ້ມຄອງວຽກງານດັ່ງກ່າວ ຕາມພາລະບົດບາດຂອງຕົນ.

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

**ດຣ. ສົມພາວ ໄຟສິດ**